ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເລກທີ: 0173../ສ.ວ.ນ

ນະຄອນຫຼວງວຽງຈັນ,ວັນທີ 14 ກຸມພາ 2023

ມະຕິ
ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ຄັ້ງທີ 01 ປະຈຳປີ 2023, ວັນທີ 14/02/2023

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 01/2023 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 14 ກຸມພາ 2023 ທີ່ສຳນັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍເປັນປະທານຂອງ **ທ່ານ ສົມຈິດ ອິນທະມິດ** ປະທານສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ພ້ອມດ້ວຍສະມາຊິກສະພາບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງທີ 04/2022.
2. **ມະຕິ:** ເຫັນດີນຳບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2022 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2022 ໂດຍແຕ່ງຕັ້ງໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນຜູ້ປະສານງານກັບຜູ້ກວດສອບພາຍນອກ ຫາກບົດລາຍງານການເງິນຂອງບໍລິສັດມີການປ່ຽນແປງໃນສ່ວນທີ່ເປັນສາລະສຳຄັນແມ່ນໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນຜູ້ແຈ້ງໃຫ້ສະພາບໍລິຫານຮັບຊາບອີກເທື່ອໜຶ່ງ ແຕ່ຫາກມີການແກ້ພຽງເລັກໜ້ອຍ ທີ່ບໍ່ເຮັດໃຫ້ບົດລາຍງານການເງິນມີການປ່ຽນແປງໃນສາລະສຳຄັນ ໃຫ້ຖືວ່າບົດລາຍງານການເງິນສະບັບດັ່ງກ່າວເປັນບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2022 ທີ່ຈະສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງຕໍ່ໄປ.
3. **ມະຕິ:** ເຫັນດີນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2023 ແລະ ໃຫ້ນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2023 ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ໄປ.
4. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເຊິ່ງມື້ດັ່ງກ່າວຈະໄດ້ກຳນົດຕໍ່ໄປໃນ **ວາລະທີ 9** ໃນອັດຕາ **36** ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມກົດໝາຍ ແລະ ຄັງສຳຮອງສະສົມອື່ນໆ ຕາມນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດ, ໃນອັດຕາ **100** ກີບຕໍ່ຮຸ້ນ, ເປັນຈຳນວນເງິນປັນຜົນທັງໝົດ **16.500.000.000** ກີບ ໂດຍກຳນົດວັນຈ່າຍເງິນປັນຜົນແມ່ນ 3 ພຶດສະພາ 2023.

5. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ **ບໍລິສັດ ພຣາຍສ໌ ວໍເຕີ້ເຮົ້າສ໌ກຸເປີ້ສ (ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Company Limited)** ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2023 ໂດຍມີຄ່າບໍລິການເປັນເງິນຈຳນວນ ບໍ່ກາຍ **36.500** ໂດລາສະຫະລັດ.

6. **ມະຕິ:** ເຫັນດີ ໃຫ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ອະນຸມັດການ ອອກຈຳໜ່າຍຮຸ້ນກູ້ໃນວົງເງິນບໍ່ເກີນ **120** ລ້ານບາດໄທ ຫຼື ທຽບເທົ່າໃນສະກຸນເງິນໂດລາ ສະຫາລັດ ລວມ ທັງການມອບອຳນາດໃຫ້ ຄະນະຜູ້ບໍລິຫານຂອງບໍລິສັດ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ ມີອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານກ່ຽວກັບການອອກຈຳໜ່າຍຮຸ້ນກູ້ຈົນສຳເລັດ.

7. **ມະຕິ:** ເຫັນດີໃຫ້ມີການຮຽກປະຊຸມສາມັນຜູ້ຖືຮຸ້ນ ໃນວັນທີ **08 ເມສາ 2023** ເວລາ **14.00** ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ ໂດຍມີວາລະເພື່ອພິຈາລະນາ ດັ່ງຕໍ່ໄປນີ້:
   1. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2022 ແລະ ບົດ ລາຍງານການເງິນຂອງບໍລິສັດ ປະຈຳປີ 2022;
   2. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2023;
   3. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປີ 2022;
   4. ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີຂອງຜູ້ ກວດສອບບັນຊີພາຍນອກ ປີ 2023;
   5. ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ;
   6. ພິຈາລະນາ ແລະ ອະນຸມັດໃຫ້ບໍລິສັດອອກຈຳໜ່າຍຮຸ້ນກູ້ ເພື່ອນຳໃຊ້ໃນການດຳເນີນທຸລະກິດ ຂອງ ບໍລິສັດ ໃນວົງເງິນບໍ່ເກີນ 120 ລ້ານບາດໄທ ຫຼື ທຽບເທົ່າໃນສະກຸນເງິນໂດລາ ສະຫາລັດ;
   7. ເລື່ອງອື່ນໆ (ຖ້າມີ).

8. **ມະຕິ:** ເຫັນດີໃຫ້ກຳນົດເອົາວັນທີ **1 ມີນາ 2023** ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດລາຍ ຊື່ຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ແລະ ຮັບເງິນປັນຜົນຈາກຜົນການດຳເນີນ ທຸລະກິດຂອງບໍລິສັດ ປະຈຳປີ 2022.

9. **ມະຕິ:** ເຫັນດີໃຫ້ແຕ່ງຕັ້ງ **ທ່ານ ລິດສະໝອນ ສໍພາບມີໄຊ** ແລະ **ທ່ານ ບຸນຖິ່ມ ຟອງວິລາດ** ໃຫ້ເປັນຜູ້ຕາງໜ້າ ບໍລິສັດຈົດທະບຽນເຊິ່ງມີຄວາມຮູ້ທາງດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າໃນຄະນະກວດກາກອງປະຊຸມຜູ້ ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ໃນສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນ ລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ **ທ່ານ ພັນໂນລາ ສຸຄະບັນດິດ** ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນ ລາຍຍ່ອຍທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນມື້ດັ່ງກ່າວເຊິ່ງເປັນຜູ້ຖືຮຸ້ນລາຍຍ່ອຍຄືຖືຮຸ້ນບໍ່ເກີນ 5 ສ່ວນ

ຮ້ອຍຂອງຈຳນວນຮຸ້ນທີ່ຈົດທະບຽນ ແລະ ຊຳລະແລ້ວທັງໝົດ ແລະ ເປັນຜູ້ທີ່ມີຄຸນນະສົມບັດຕາມລາຍລະອຽດທີ່ກ່າວມາຂ້າງເທິງ.

ກອງປະຊຸມໄດ້ປິດລົງເວລາ 16:00 ໂມງ ຂອງວັນດຽວກັນ.

ປະທານສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ທ່ານ ສົມຈິດ ອິນທະມິດ